# ສວນລຶກລັບຂອງນາງມ້ອຍ



WFP
World Food
Programme

# ກິນອາຫານດີເພື່ອການເຕີບໃຫຍ່ ແລະ ປູກອາຫານເອົາໄວ້ເພື່ອບໍລິໂພກຢ່າງພຽງພໍ



ມີໂຮງຮຽນແຫ່ງໜຶ່ງຕັ້ງຢູ່ເຂດຫ່າງໄກສອກຫຼີກ ທີ່ອ້ອມຮອບໄປດ້ວຍແມ່ນ້ຳລຳເຊ ແລະ ພູເຂົາລຳເນົາໄພ. ໂຮງຮຽນແຫ່ງນີ້ມີບັນຍາກາດດີ ແລະ ເຕັມໄປດ້ວຍມົນສະເໜ່ ເໝືອນຄວາມຝັນ ແຕ່ນັກຮຽນຈຳນວນໜຶ່ງມີສຸຂະພາບບໍ່ຄ່ອຍດີ ແລະ ຂາດສານອາຫານ




ດັ່ງນັ້ນ, ຈິ່ງເຮັດໃຫ້ນັກຮຽນບໍ່ມີຄວາມກະຕືລືລົ້ນ
ຕໍ່ການຮຽນ ແລະ ການເຂົ້າຮ່ວມກິດຈະກຳຕ່າງໆ


ບັນຍາກາດໃນຫ້ອງຮຽນເຫັນວ່າເມື່ອເອື້ອຍຄູຂຶ້ນຫ້ອງສອນ
ມີນັກຮຽນຈຳນວນໜຶ່ງເຫງົານອນ ແລະ ບໍ່ຕັ້ງໃຈຮຽນ
ຍ້ອນນັກຮຽນຫິວເຂົ້າ, ອິດເມື່ອຍ ແລະ ອ່ອນເພຍ


ໃນຂະນະດຽວກັນນັ້ນ ມີນັກຮຽນ ຜູ້ໜຶ່ງຊື່ວ່ານາງ ນ້ອຍ ກຳລັງນັ່ງ ຊຶງຢູ່ ແລະ ເວົ້າກັບຕົວເອງວ່າ
ຂ້ອຍຮູ້ສຶກເມື່ອຍຫຼາຍ ແລະ ບໍ່ຢາກຮຽນໜັງສື


ທ້າວວັນນາກໍຄິດເຊັ່ນດຽວກັນກັບນາງ ທ້າວວັນນາຫຼຽວໄປເບິ່ງເດີ່ນເຕະບານ ຜ່ານປ່ອງຢ້ຽມ ແລະ ເວົ້າກັບຕົວເອງວ່າ
ຂ້ອຍຮູ້ສຶກບໍ່ສະບາຍ ແລະ ບໍ່ມີແຮງຫຼິ້ນກິລາ ເຮີ້...


ໃນຂະນະນັ້ນ ນາງນ້ອຍໄດ້ຊວນທ້າວວັນນາ
ໄປຫຼິ້ນ. ນາງບອກວ່າ...
ໄປ໋! ພວກເຮົາໄປຫຼິ້ນຢູ່ນອກ
ໂຮງຮຽນຈັກໜ້ອຍ ບາງເທື່ອອາດ
ຈະເຮັດໃຫ້ພວກເຮົາຮູ້ສຶກດີຂຶ້ນ
ຫຼັງຈາກນັ້ນ ທັງສອງກໍ່ໄດ້ອອກໄປຫຼິ້ນຢູ່ປ່າ


ໃນຕອນພວກເຂົາເຈົ້າກຳລັງຍ່າງຫຼິ້ນເຂົ້າໄປໃນປ່າເລິກຢູ່ນັ້ນ
ພວກເຂົາໄດ້ເຫັນສວນສີຂຽວແຫ່ງໜຶ່ງທີ່ເຕັມໄປດ້ວຍ
ພືດຜັກ ແລະ ໝາກໄມ້ ມີແມ່ນ້ຳນ້ອຍໆໄຫຼຜ່ານສວນດັ່ງກ່າວ
ພວກເຂົາທັງສອງຮູ້ສຶກຕື່ນເຕັ້ນ ແລະ ພາກັນຍ່າງເຂົ້າໄປເບິ່ງ


ທ້າວວັນນາຫຼຽວເບິ່ງນາງນ້ອຍ ແລະ ເວົ້າອອກມາວ່າ
ນ້ອຍ! ຂ້ອຍຮູ້ສຶກວ່າ ສວນນີ້ອັດສະຈັນຫຼາຍ
ຂ້ອຍກໍບໍ່ເຄີຍເຫັນສວນ ງາມໆແບບນີ້ມາກ່ອນ ໃນຊີວິດຂອງຂ້ອຍ
ທ້າວວັນນາ ເດັດເອົາ ໝາກຖົ່ວຍາວ ຝັກໜຶ່ງ ຈາກຕົ້ນ
ງາມແທ້
ເປັນຕາແຊບ


ທັນໃດນັ້ນ ມີນາງຟ້າຕົນໜຶ່ງ ປາກົດຕົວອອກມາ ຢູ່ຕໍ່ໜ້າ ພວກເຂົາເຈົ້າ
ບໍ່ຕ້ອງຢ້ານ
ໂອ້!
ທ່ານແມ່ນໃຜ? ກະລຸນາຢ່າທຳຮ້າຍ ພວກເຮົາເລີຍ
ສວນລຶກລັບແຫ່ງນີ້ ແມ່ນຂອງທ່ານບໍ? ພວກເຮົາບໍ່ຮູ້ວ່າ ສວນນີ້ ມີເຈົ້າຂອງ
ເດັກນ້ອຍເອີຍ! ບໍ່ເປັນຫຍັງດອກ


ສວນແຫ່ງນີ້ ແມ່ນຂອງພວກເຈົ້າ, ພວກເຈົ້າຢາກກິນຫຍັງ ກໍເອົາໄດ້ ຕາມຄວາມປະສົງ
ແຕ່ວ່າ, ກ່ອນກິນຜັກ ແລະ ໝາກໄມ້ໃນສວນນີ້ ຕ້ອງລ້າງໃຫ້ສະອາດກ່ອນ ຈິ່ງຈະບໍ່ເຮັດໃຫ້ພວກເຈົ້າ ເຈັບທ້ອງ.
ຫຼັງຈາກນັ້ນ ນາງຟ້າຕົນນັ້ນ ກໍຫາຍຕົວໄປຢ່າງໄວວາ
ທ້າວວັນນາ ແລະ ນາງນ້ອຍ ແນມເບິ່ງໜ້າກັນດ້ວຍອາການງົງ ແລ້ວພາກັນຫົວຂຶ້ນຢ່າງມີຄວາມສຸກ
ສວນນີ້ ເປັນຂອງເຮົາ ແລ້ວ!


ກ່ອນພວກເຂົາເຈົ້າສອງຄົນຈະກັບ
ເມືອບ້ານ ພວກເຂົາໄດ້ເກັບເອົາໝາກໄມ້
ແລະ ພືດຜັກ ແລ້ວເອົາໄປລ້າງຢູ່ຫ້ວຍ
ແລະ ພາກັນກິນຈົນອີ່ມ
ແຊບຫຼາຍ
ແມ່ນແລ້ວ


ທ້າວວັນນາບອກນາງນ້ອຍວ່າ
ບໍ່ໃຫ້ບອກຄົນອື່ນຮູ້ກ່ຽວກັບສວນ
ທີ່ລຶກລັບແຫ່ງນັ້ນ


ມື້ຕໍ່ມາ ທ້າວວັນນາ ແລະ ນາງນ້ອຍຕື່ນເຊົ້າຂຶ້ນມາ
ພ້ອມກັບຄວາມສົດຊື່ນ ພວກເຂົາເຈົ້າຮູ້ສຶກດີ ແລະ
ຫ້າວຫັນກວ່າແຕ່ລະມື້


ປົກກະຕິ ພໍ່ແມ່ຈະປຸກ
ໃຫ້ພວກເຂົາຕື່ນ
ຕອນເຊົ້າທຸກໆມື້
ຕັ້ງແຕ່ມື້ນີ້ໄປ ຊີວິດ
ຂອງເຂົາເຈົ້າທັງສອງ
ກຳລັງຈະມີການ
ປ່ຽນແປງ
ຢູ່ໃນຫ້ອງຮຽນ ທ້າວວັນນາ
ແລະ ນາງນ້ອຍໄດ້ກາຍເປັນ
ຄົນທີ່ມີຄວາມກະຕືລືລົ້ນ ແລະ
ຕັ້ງໃຈຕໍ່ການຮ່ຳຮຽນ
ເມື່ອເອື້ອຍຄູໃຫ້ວຽກບ້ານ
ເຂົາເຈົ້າກໍ່ສາມາດເຮັດໄດ້ຢ່າງດີ
ພວກເຂົາສ້າງຄວາມແປກປະຫຼາດ
ໃຫ້ແກ່ຜູ້ອື່ນທີ່ໄດ້ເຫັນ
ເອື້ອຍຄູຄິດວ່າ ແມ່ນຫຍັງ
ເຮັດໃຫ້ພວກເຂົາ
ແຕກຕ່າງຈາກ
ເດັກນັກຮຽນຜູ້ອື່ນໆ?


ຫຼາຍມື້ຜ່ານໄປ ຫຼັງຈາກເລີກ
ໂຮງຮຽນແຕ່ລະມື້, ໝູ່ນັກຮຽນ
ຜູ້ອື່ນກໍ່ພາກັນກັບບ້ານຕາມປົກກະຕິ
ແຕ່ທ້າວວັນນາ ແລະ ນາງນ້ອຍ ພາກັນ
ໄປສວນແຫ່ງນັ້ນ ເພື່ອກິນຜັກ ແລະ
ໝາກໄມ້ທີ່ພວກເຂົາເຄີຍກິນຜ່ານມາ
ເຂົາເຈົ້າມີສຸຂະພາບທີ່ດີ
ແລະ ມີຄວາມສະຫຼາດ
ກວ່າໝູ່ນັກຮຽນຄົນອື່ນໆ


ຍ້ອນເຫດຜົນດັ່ງກ່າວ ໝູ່ຄູ່ ແລະ ເອື້ອຍຄູ
ຈຶ່ງສົງໄສວ່າຍ້ອນຫຍັງທ້າວວັນນາ ແລະ ນາງນ້ອຍ
ຈຶ່ງມີຄວາມສຸກ ມີຄວາມຫ້າວຫັນ ແລະ ສະຫຼາດແທ້
ຄູ ແລະ ໝູ່ນັກຮຽນຜູ້ໃດ ກໍ່ຢາກຮູ້
ສາເຫດວ່າ ເປັນຫຍັງທ້າວວັນນາ
ແລະ ນາງ ນ້ອຍຈຶ່ງມີຄວາມແຕກຕ່າງ
ຈາກຜູ້ອື່ນແທ້
ເຊິ່ງແຕ່ກ່ອນ ພວກເຂົາທັງຈ່ອຍ
ທັງຂາດຄວາມອົດທົນ ແລະ
ມັກເຈັບປ່ວຍຢູ່ຕະຫຼອດ
ແຕ່ດຽວນີ້ ພວກເຂົາຮຽນໄດ້ໄວ
ແລະ ມີສຸຂະພາບດີຂຶ້ນຫຼາຍ


ຖ້າສອງຄົນນີ້ເປັນແບບນີ້ຕໍ່ໄປ ມີຫວັງວ່າ
ຊີວິດພວກເຂົາຈະປະສົບຜົນສໍາເລັດ
ໃນພາຍພາກໜ້າຢ່າງແນ່ນອນ
ບາງທີ ທ້າວ ວັນນາ ອາດຈະກາຍເປັນ
ນັກພັດທະນາຊຸມຊົນ ແລະ ນາງ ນ້ອຍ
ອາດກາຍເປັນນັກວິທະຍາສາດ ກໍ່ເປັນໄດ້
ຄູຮູ້ສຶກດີໃຈຫຼາຍທີ່ເຫັນສອງຄົນຫ້າວຫັນ ແລະ
ສະຫຼາດຫຼັກແຫຼມແບບນີ້, ແຕ່ຄູກໍ່ອິດສົງໄສ
ບໍ່ໄດ້ວ່າແມ່ນຫຍັງເຮັດໃຫ້ພວກເຂົາເປັນແບບນີ້
ສອງຄົນນີ້
ເປັນເດັກນ້ອຍ
ຕົວຢ່າງ


ເວລາຜ່ານໄປ ທ້າວ
ວັນນາ ແລະ ນາງ ນ້ອຍ
ເລີ່ມຮູ້ສຶກວ່າໝາກໄມ້ ແລະ
ພືດຜັກທີ່ຢູ່ໃນສວນດັ່ງກ່າວ
ເລີ່ມມີໜ້ອຍລົງ
ເຖິງແມ່ນວ່າພວກເຂົາໄດ້ກິນ
ແຕ່ພຽງຢ່າງດຽວ ແລະ
ບໍ່ໄດ້ເອົາເມືອບ້ານກໍຕາມ
ຄວາມອຸດົມສົມບູນຂອງສວນ
ແຫ່ງນັ້ນເລີ່ມຫ່ຽວແຫ້ງລົງ
ຄືເປັນ
ແບບນີ້ນໍ້!


ມາມື້ໜຶ່ງ ສວນນັ້ນກໍບໍ່ ມີຫຍັງເຫຼືອໃຫ້ ທ້າວ ວັນນາ ແລະ ນາງ ນ້ອຍເກັບກິນໄດ້ ອີກເລີຍ ມັນເປັນເລື່ອງ ທີ່ໜ້າເສົ້າໃຈແທ້ໆ
ພວກເຂົານັ່ງຢູ່ແຄມແມ່ນ້ຳ ແລະ ຄິດຈະຫາທາງແກ້ໄຂ
ຂ້ອຍບໍ່ຢາກເສຍສວນ ອັນອຸດົມສົມບູນແຫ່ງນີ້ ໄປຈັກໜ້ອຍເລີຍ!
ຕັ້ງແຕ່ພວກເຮົາມາພົບສວນແຫ່ງນີ້ ຂ້ອຍມີຄວາມສຸກທີ່ເຮົາສາມາດມາ ເກັບກິນຜັກ ແລະ ໝາກໄມ້ຈົນອີ່ມ ມາຕະຫຼອດ ແລະເຮັດໃຫ້ສະໝອງ ຂ້ອຍປອດໂປ່ງດີຂຶ້ນ
ຂ້ອຍຫວັງວ່າ ນາງຟ້າຕົນນັ້ນ ອາດສາມາດ ບອກເຮົາໄດ້ວ່າ ຄວນເຮັດ ແນວໃດ


ທັນໃດນັ້ນ ນາງຟ້າກໍ່ປະກົດໂຕຂຶ້ນມາ
ພວກເຈົ້າ ເອີ້ນຫາ ຂ້ອຍແມ່ນ ບໍ່?
ແມ່ນແລ້ວ... ພວກເຮົາ ຕ້ອງການຄວາມຊ່ວຍເຫຼືອ ຈາກທ່ານ
ພວກເຮົາ ກຳລັງຈະສູນເສຍ ສວນແຫ່ງນີ້ ໄປແລ້ວ!
ສວນແຫ່ງນີ້ ບໍ່ມີຫຍັງ ໃຫ້ພວກເຮົາ ກິນອີກແລ້ວ
ຂ້ອຍກໍຮູ້ສຶກເສຍໃຈ ພວກເຈົ້າສອງຄົນຮູ້ແຕ່ ເກັບກິນໝາກໄມ້ ແລະ ພືດຜັກທີ່ມີຢູ່ສວນນີ້
ແຕ່ພວກເຈົ້າບໍ່ເຄີຍຊ່ວຍອານຸລັກ ແລະ ຮັກສາມັນໄວ້ ດັ່ງນັ້ນ ມັນຈິ່ງບໍ່ມີຫຍັງເຫຼືອ ໃຫ້ພວກເຈົ້າກິນອີກຕໍ່ໄປ


ເມື່ອໄດ້ຍິນແບບນັ້ນ ນາງນ້ອຍກໍ່ເຂົ້າໃຈ ແລະ ຄິດໄດ້ວ່າຢູ່ບ້ານຂອງນາງ ພໍ່ແມ່ຂອງນາງກໍເຮັດສວນເພື່ອຈະໄດ້ ພືດຜັກມາໃຫ້ຄອບຄົວໄດ້ກິນ
ພໍ່ແມ່ຕ້ອງດູແລ ໃສ່ຝຸ່ນ ແລະ ໃຫ້ນໍ້າກັບພືດຜັກທີ່ປູກເປັນປະຈໍາ
ນາງຟ້າຍິ້ມດ້ວຍຄວາມດີໃຈຫຼາຍ ທີ່ໄດ້ຍິນນາງນ້ອຍເຂົ້າໃຈ
ພວກເຈົ້າສອງຄົນ ເລືອກເກັບຮັກສາເປັນຄວາມ ລັບ ແລະ ບໍ່ບອກໃຫ້ຄົນອື່ນຮູ້ ກ່ຽວກັບສວນລຶກລັບ ແຫ່ງນີ້
ພວກເຈົ້າຮູ້ບໍ່ວ່າຖ້າພວກເຮົາ ຮູ້ຈັກຮັກສາ ພວກເຮົາກໍ່ຈະມີອາຫານ ກິນໄດ້ຕະຫຼອດລະດູການ



ເປັນຫຍັງພືດຜັກຢູ່ໃນສວນນີ້ຈິ່ງມີໜ້ອຍລົງ ເຈົ້າເຫັນບໍ່ວ່າບໍ່ມີຫຍັງເຫຼືອອີກແລ້ວ
ຊາຍໜຸ່ມເອີຍ! ເຈົ້າຍັງບໍ່ທັນເຂົ້າໃຈເທື່ອ ໃຫ້ເຈົ້າຫຼຽວໄປອ້ອມໆໂຕເບິ່ງ! ສວນນີ້ກວ້າງໃຫຍ່ຫຼາຍ ມີແຕ່ພວກເຈົ້າສອງຄົນຈະບົວລະບັດໄດ້ແນວໃດ?
ຖ້າພວກເຈົ້າພາໝູ່ຄູ່ມາຊ່ວຍກັນເບິ່ງແຍງ ພວກເຈົ້າຈະສາມາດປູກຜັກ ແລະ ໝາກໄມ້ໄວ້ກິນຢ່າງພຽງພໍສໍາລັບພວກເຈົ້າໝົດທຸກຄົນ
ນາງນ້ອຍເຂົ້າໃຈໃນສິ່ງທີ່ນາງຟ້າອະທິບາຍ ແລະ ເວົ້າກັບທ້າວວັນນາວ່າ
ໄປ໋! ພວກເຮົາໄປບອກໝູ່ຄູ່ຂອງພວກເຮົາໃຫ້ຮູ້ກ່ຽວກັບສວນລຶກລັບນີ້ກັນເທາະ
ດີແລ້ວ


ຫຼັງຈາກນັ້ນ ນາງນ້ອຍ ແລະ ທ້າວວັນນາ
ກໍ່ໄດ້ບອກໝູ່ຄູ່ໃຫ້ຮູ້ຈັກກ່ຽວກັບສວນດັ່ງກ່າວ
ແລະ ໄດ້ນຳພາເຂົາເຈົ້າມາສວນດັ່ງກ່າວ
ຖ້າພວກເຮົາໝົດທຸກຄົນ ຢາກມີສຸຂະພາບດີ, ສະຫຼາດ ແລະ ມີໂພຊະນາການ ພວກເຮົາຕ້ອງຊ່ວຍກັນປູກຜັກ ແລະ ໝາກໄມ້ເພື່ອຟື້ນຟູ ສວນແຫ່ງນີ້ນຳກັນ


ພວກເຮົາຊ່ວຍກັນປູກເອົາ ໄວ້ກິນ ເມື່ອພວກເຮົາໄດ້ກິນ ພວກເຮົາຈະເຕີບໃຫຍ່
ສວນແຫ່ງນີ້ ເປັນແຫຼ່ງອາຫານ ໃຫ້ແກ່ພວກເຮົາ


ໃນແຕ່ລະມື້ ພວກເຂົາເຈົ້າໄດ້ພາກັນປູກຜັກ ແລະ ຕົ້ນໄມ້ກິນໝາກທີ່ມີປະໂຫຍດ
ຕໍ່ຮ່າງກາຍ ແລະ ສະໝອງຂອງພວກເຂົາເຊັ່ນ: ສາລີ, ຜັກສະຫຼັດ, ຜັກກາດຫົວ,
ຜັກຫອມປ້ອມ, ໝາກກ້ວຍ, ໝາກນັດ, ໝາກໂມ, ຜັກ ແລະ ໝາກໄມ້ອື່ນໆ...


ຫຼັງເລີກໂຮງຮຽນທຸກມື້
ເດັກນັກຮຽນໄດ້ພາກັນໄປສວນ
ຊ່ວຍເຫຼືອກັນຫົດນໍ້າຜັກ
ແລະ ດູແລສວນຜັກດັ່ງກ່າວ
ຢ່າງຫ້າວຫັນ


ໃນທີ່ສຸດສວນນັ້ນໄດ້ຮັບການ
ຟື້ນຟູຄືນແລະ ໄດ້ກາຍເປັນ
ແຫຼ່ງອາຫານທີ່ສຳຄັນ
ໃຫ້ກັບນັກຮຽນໝົດທຸກຄົນ
ການພັດທະນາ
ດ້ານສຸຂະພາບ
ແລະ ມັນສະໜອງ
ຂອງເດັກນັກຮຽນ
ໄດ້ຊ່າລືໄປທົ່ວ
ທຸກສາລະທິດ


ຜູ້ໃຫຍ່ຫຼາຍຄົນສົງໄສວ່າເປັນ
ຫຍັງເດັກນັກຮຽນເຫຼົ່ານີ້ຈິ່ງມີ
ສຸຂະພາບດີ, ສະຫຼາດສ່ອງໃສ
ແລະ ມີຄວາມສຸກຫຼາຍແທ້


ມາມື້ໜຶ່ງ ເດັກນັກຮຽນເຫຼົ່ານັ້ນ
ກໍໄດ້ຕັດສິນໃຈອະທິບາຍຄວາມເປັນມາ
ຂອງສວນໃຫ້ຊາວບ້ານຮັບຮູ້ ເພື່ອໃຫ້
ທຸກຄົນໃນບ້ານ ເຊັ່ນ: ປູ່ຍ່າ ແລະ ພໍ່ແມ່
ຜູ້ມີສຸຂະພາບບໍ່ດີໄດ້ຮັບຜົນປະໂຫຍດ
ເຊັ່ນດຽວກັນກັບພວກເຂົາເຈົ້າ.


ພວກນ້ອງນັກຮຽນ
ໄດ້ພາຊາວບ້ານໄປເບິ່ງ
ສວນດັ່ງກ່າວ ແລະ
ອະທິບາຍ ສິ່ງທີ່ເຂົາເຈົ້າ
ໄດ້ພາກັນເຮັດໃນແຕ່ລະມື້
ຫຼັງຈາກນັ້ນ ທັງນ້ອງນັກຮຽນ ແລະ
ຊາວບ້ານກໍ່ຕົກລົງເຫັນດີນຳເອົາແກ່ນຜັກ
ແລະ ໝາກໄມ້ທີ່ໄດ້ຈາກສວນນັ້ນ
ໄປຂະຫຍາຍປູກຢູ່ໃນບ້ານ ເພື່ອໃຫ້
ແຕ່ລະຄອບຄົວມີສວນຄົວຂອງຕົນເອງ
ພ້ອມດຽວກັນນັ້ນ ພວກເຂົາຍັງບອກຕໍ່
ໃຫ້ຊາວບ້ານອື່ນຮູ້ເລື່ອງສວນຄົວ
ດັ່ງກ່າວນຳ ເຊິ່ງຊາວບ້ານອື່ນກໍ່ສາມາດ
ສ້າງສວນຄົວເປັນຂອງຕົນເອງໄດ້ໃນທີ່ສຸດ


ໃນທີ່ສຸດ ເດັກນ້ອຍທຸກຄົນກໍ່ກາຍເປັນຄົນສະຫຼາດ ມີສຸຂະພາບທີ່ດີ
ບໍ່ຂາດສານອາຫານ ແລະ ສຳຄັນໄປກວ່ານັ້ນກໍ່ຄື ພວກເຂົາ
ມີຄວາມອາດສາມາດໃນການພັດທະນາຕົນເອງເພື່ອອະນາຄົດທີ່ດີ
ພວກເຈົ້າໄດ້ສ້າງສວນຄົວ ໃນໂຮງຮຽນຂອງພວກເຈົ້າ ແລ້ວບໍ່?
ບໍ່ຕ້ອງລໍຖ້າຄົນອື່ນ ມາເຮັດໃຫ້ ຈິ່ງສ້າງຂຶ້ນ ດ້ວຍມືຂອງເຈົ້າເອງ

World Food Programme

ນິທານສຳລັບເດັກນ້ອຍ ແລະ ທຸກຄົນ
ຈັດທຳໂດຍ ອົງການອາຫານໂລກ

ແຕ່ງໂດຍ ອົງການອາຫານໂລກ
ພາບປະກອບໂດຍ ສຳນັກພິມ ມີດີບຸກສ໌
ເຣືອງສັກ ດວງພູາ
ຄອມພິວເຕີ້ກຼາຟຟິກ ນ້ອຍ ສີປະເສີດ
ຈຳນວນພິມ 2,500 ຫົວ
ເລກທະບຽນພິມຈຳໜ່າຍ: ຕາມທບ133ພ20062019

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ອາຫານໂລກ, ອົງການ
ສວນລຶກລັບຂອງນາງນ້ອຍ / ໂດຍ ອົງການອາຫານໂລກ.
--ວຽງຈັນ : ມີດີບຸກສ໌, 2019
24 ໜ້າ : ພາບປະກອບ ; 20 ຊມ
1. ວັນນະກຳສຳລັບເດັກ
2. ວັນນະກຳວິທິຍາສາດ
I. ຊື່ເລື່ອງ
808.06854 -- dc21
ISBN 978-9932-02-192-6



ພິມຄັ້ງທີ 1 : ກໍລະກົດ 2019
ພິມທີ່: ບໍລິສັດ ປານຄຳ ຈຳປາ ຈຳກັດ
ສະຫງວນລິຂະສິດ
© 2019 ອົງການອາຫານໂລກ

ມີດີບຸກສ໌ MEEDEE BOOKS